ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 1014 /ອຊ

ນະຄອນຫລວງວຽງຈັນ, ວັນທີ 23 ກໍລະກົດ 2024

# ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

**ເຖິງ: ບັນດາບໍລິສັດສະໜອງເຄື່ອງໃຊ້ຫ້ອງການ**

**ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນສະໜອງເຄື່ອງໃຊ້ຫ້ອງການ (ຈັກກ໋ອບປີ້ເອກະສານ) ເພື່ອຮັບໃຊ້ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ ໃນວັນທີ 18-22 ສິງຫາ 2024.**

- ອີງຕາມການເຫັນດີຂອງ ຄະນະນຳກະຊວງການຕ່າງປະເທດ ຄັ້ງວັນທີ 11 ກໍລະກົດ 2024.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີອຸປະກອນພຽງພໍ ແລະ ໄດ້ມາດຕະຖານ ແລະ ມີປະສົບປະການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງເຊົ່າເຄື່ອງຈັກກ໋ອບປີ້ເອກະສານ ເພື່ອຮັບໃຊ້ໃຫ້ແກ່ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 18-22 ສິງຫາ 2024 ທີ່ ໂຮງແຮມພູແມນ, ແຂວງຫຼວງພະບາງ.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 24 ກໍລະກົດ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 9:30 ໂມງ ຂອງວັນທີ 8 ສິງຫາ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ 10:00 ໂມງ ຂອງວັນທີ 8 ສິງຫາ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

ເຊັນແທນ ຫົວໜ້າກົມ

ຮອງຫົວໜ້າກົມ

ແສງພະອາທິດ ສະນຸກາຜົນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 1013 /ອຊ

ນະຄອນຫລວງວຽງຈັນ, ວັນທີ 23 ກໍລະກົດ 2024

# ເງື່ອນໄຂ ແລະ ຄຳແນະນຳສຳລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນເຊົ່າເຄື່ອງຈັດກ້ອບປີ້ເອກະສານ ເພື່ອຮັບໃຊ້ໃຫ້ແກ່ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 18-22 ສິງຫາ 2024 ທີ່ ໂຮງແຮມພູແມນ, ແຂວງຫຼວງພະບາງ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດຳເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊຳລະອາກອນທີ່ໃຊ້ໄດ້ເຖິງສົກປີ 2023 ຫຼື 2022;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສຳຮອງຈາກທະນາຄານ);
6. ຕ້ອງມີເງິນຄ້ຳຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ) ຫຼື ເປັນແຊກເງິນຄ້ຳປະກັນຂອງບໍລິສັດ;
7. ບໍລິສັດຕ້ອງມີອຸປະກອນທີ່ໄດ້ມາດຕະຖານ, ມີຈຳນວນຄົບຖ້ວນ ແລະ ປະສົບການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ມາກ່ອນ ຢ່າງໜ້ອຍ 02 ປີ;
8. ບໍລິສັດຕ້ອງສະໜອງຈັກກ້ອບປີ້ເອກະສານ ພ້ອມດ້ວຍພະນັກງານປະຈຳ ຈຳນວນ 3 ເຄື່ອງ, ເຄື່ອງຈັກກ້ອບປີ້ຕ້ອງມີຄວາມສາມາດໃນການກ້ອບປີ້ໄດ້ໄວ ແລະ ແຈ້ງດີ, ເປັນສີຂາວ-ດຳ ແລະ ຕ້ອງມີເຄື່ອງພ້ອມກ່ອນວັນທີ 17 ສິງຫາ 2024 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດຳເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແນະນຳຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

ເຊັນແທນ ຫົວໜ້າກົມ

ຮອງຫົວໜ້າກົມ

ແສງພະອາທິດ ສະນຸກອົນ